# ທຄຕລ ແລະ ທະນາຄານທະນາຊາດ (ປະເທດໄທ)

# ຮ່ວມມືກັນສ້າງມິຕິໃໝ່ໃນການຊຳລະສະສາງລະຫວ່າງປະເທດດ້ວຍ QR CODE




ນັບແຕ່ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ຫັນເປັນທະນາຄານທຸລະກິດ ໄດ້ມີການພັດທະນາຢ່າງຕໍ່ເນື່ອງ ທີ່ມຸ່ງໝັ້ນໃນການສ້າງນະວັດຕະກຳໃໝ່ດ້ານບໍລິການທະນາຄານ ອອກຮັບໃຊ້ສັງຄົມຕະຫຼອດມາ ທຸກຜະລິດຕະພັນແມ່ນຄຳນຶງເຖິງຄວາມຕ້ອງການຂອງລູກຄ້າ, ສ້າງມາເພື່ອຕອບໂຈດໃນການໃຊ້ຊີວິດໃຫ້ງ່າຍຂຶ້ນໃນສັງຄົມເທັກໂນໂລຢີທີ່ທັນສະໄໝ ແລະ ການດຳເນີນທຸລະກິດໃນຍຸກໃໝ່ ໂດຍສະເພາະແມ່ນການຊຳລະສະສາງຜ່ານອີເລັກໂທຣນິກທີ່ສ້າງຄວາມສະດວກສະບາຍ, ກວດສອບໄດ້, ບົນພື້ນຖານຄວາມປອດໄພ ແລະ ໄດ້ມາດຕະຖານສາກົນ.

ຜະລິດຕະພັນ BCEL ONE ຊ່ວຍໃຫ້ໃຊ້ຊີວິດໃນຍຸກປະຈຸບັນງ່າຍຂຶ້ນ ເພາະສາມາດຄວບຄຸມທຸລະກຳດ້ານການເງິນດ້ວຍຕົນເອງເຊິ່ງໄດ້ຮັບການຍອມຮັບຈາກສັງຄົມເປັນຢ່າງດີ ແລະ ເມື່ອຕົ້ນປີທີ່ຜ່ານມານີ້ BCEL ໄດ້ສ້າງຈຸດປ່ຽນຂອງການຊຳລະເງິນຮູບແບບໃໝ່ທີ່ຖືກໃຈຜູ້ຊົມໃຊ້ ນັ້ນຄືການຊຳລະດ້ວຍ QR Code ຜ່ານ BCEL OnePay ທີ່ຊ່ວຍຫຼຸດຜ່ອນການນຳໃຊ້ເງິນສົດໃນການຊຳລະຄ່າສິນຄ້າ ແລະ ບໍລິການ, ສະດວກວ່ອງໄວ, ປະຢັດເວລາ, ຕົ້ນທຶນຕ່ຳ, ຜູ້ຊື້ສະບາຍຜູ້ຂາຍສະດວກ, ເຊິ່ງມີຄວາມປອດໄພ, ສາມາດກວດສອບໄດ້, ໄດ້ມາດຕະຖານສາກົນຈຶ່ງເປັນທີ່ນິຍົມ ແລະ ມີຜູ້ຊົມໃຊ້ຢ່າງແຜ່ຫຼາຍ.

ເພື່ອຕອບສະໜອງກັບຄວາມຮຽກຮ້ອງຕ້ອງການຂອງລູກຄ້າ ແລະ ເຫັນໄດ້ເຖິງຄວາມສຳຄັນຂອງການພັດທະນາຜະລິດຕະພັນທາງດ້ານບໍລິການທະນາຄານແບບ ດີຈີຕໍ ທຄຕລ ຈຶ່ງໄດ້ຮ່ວມມືກັບທະນາຄານທະນາຊາດໃນການສ້າງນະວັດຕະກຳໃໝ່ດ້ານບໍລິການທະນາຄານ ແບບດີຈີຕໍ ແລະ ໄດ້ຈັດພິທີຖະແຫຼງຂ່າວການຮ່ວມມືກັນໃນການພັດທະນາລະບົບການຊຳລະສະສາງລະຫວ່າງ ສປປ ລາວ ແລະ ໄທ ຜ່ານລະບົບ QR ຢ່າງເປັນທາງການໃນວັນທີ 20/03/2018 ຜ່ານມາໃນງານ FinTech Fair 2018 ທີ່ບາງກອກ, ອາຄານສູນການຮຽນຮູ້ທະນາຄານແຫ່ງປະເທດໄທ,






ເປັນກຽດເຂົ້າຮ່ວມໂດຍ ທ່ານ ສອນໄຊ ສິດພະໄຊ ຮອງຜູ້ວ່າການທະນາຄານແຫ່ງ ສປປ ລາວ (BOL), ທ່ານ ນາງ ຣຸຊຸກອນ ສິຣິໂຍທິນ ຮອງຜູ້ວ່າການດ້ານສະຖຽນລະພາບສະຖາບັນການເງິນທະນາຄານແຫ່ງປະເທດໄທ (BOT), ທ່ານ ຄຳຊຽນ ມິ່ງບຸບຜາ ຮອງຜູ້ອຳນວຍການໃຫຍ່ ທຄຕລ, ທ່ານ ບັນທະລາດ ແກ້ວປະເສີດ ຮອງຜູ້ອຳນວຍການໃຫຍ່ ທຄຕລ, ທ່ານ ອະນຸວັດ ເຫຼືອງທະວີກຸນ ຮອງກຳມະການຜູ້ຈັດການທະນາຄານທະນາຊາດ ພ້ອມດ້ວຍແຂກທີ່ມີກຽດ ແລະ ນັກຂ່າວ-ສື່ມວນຊົນກໍ່ໄດ້ເຂົ້າຮ່ວມຢ່າງພ້ອມພຽງ.

ທຄຕລ ແລະ ທະນາຄານທະນະຊາດໄດ້ມີການຮ່ວມມືກັນດ້ວຍດີ ນັບແຕ່ປີ 2009 ເປັນຕົ້ນມາ ແລະ ການຮ່ວມມືໃນການພັດທະນາລະບົບການຊຳລະສະສາງລະຫວ່າງປະເທດຜ່ານລະບົບ QR ໃນຄັ້ງນີ້ຈະເປັນການສົ່ງເສີມການຫຼຸດຜ່ອນການນຳໃຊ້ເງິນສົດ ແລະ ການຄ້າຂາຍລະຫວ່າງສອງປະເທດ ເຊິ່ງຈະເປີດໃຫ້ນຳໃຊ້ໄດ້ໃນໄຕມາດ II ຂອງປີນີ້. ໃນໄລຍະທຳອິດນັ້ນ ລູກຄ້າຂອງ BCEL ຈະສາມາດຈ່າຍຄ່າສິນຄ້າ ແລະ ບໍລິການຜ່ານ QR ຂອງລະບົບ Promptpay ທຸກຮ້ານຄ້າຂອງໄທໄດ້ ຫຼັງຈາກນັ້ນ; ທັງສອງຝ່າຍຈະສືບຕໍ່ຮ່ວມມືກັນພັດທະນາໃຫ້ລູກຄ້າທີ່ໃຊ້ Promptpay ສາມາດ ຊຳລະຄ່າສິນຄ້າ ແລະ ບໍລິການໃນ ສປປ ລາວ ຜ່ານຮ້ານຄ້າທີ່ໃຊ້ BCEL OnePay.

ນັບວ່າເປັນຄັ້ງທຳອິດທີ່ສອງທະນາຄານໃຫຍ່ແຖວໜ້າຂອງສອງປະເທດ ລາວ-ໄທ ຮ່ວມກັນພັດທະນາລະບົບການຊຳລະສະສາງລະຫວ່າງປະເທດດ້ວຍ QR ເປັນການຮ່ວມກັນຊຸກຍູ້ສ້າງ STANDDARD QR CODE ໃຫ້ເປັນມາດຕະຖານດຽວກັນ ທີ່ມີຄວາມປອດໄພ ແລະ ໄດ້ມາດຕະຖານສາກົນ ເຊິ່ງຈະເພີ່ມຄວາມຄ່ອງຕົວ ແລະ ເປັນປະໂຫຍດຕໍ່ລະບົບຮັບຊຳລະເງິນລະຫວ່າງປະເທດທີ່ມີຄວາມສະດວກວ່ອງໄວປອດໄພ. ພ້ອມທັງເປັນການປ່ຽນແປງທີ່ຊຸກຍູ້ທັງສອງປະເທດ ກ້າວໄປສູ່ສັງຄົມໄຮ້ເງິນສົດ “Cashless Society”.

ໃນຕໍ່ໜ້າ BCEL ຈະສືບຕໍ່ຮ່ວມມືກັບສາກົນໃນການນຳໃຊ້ເທັກໂນໂລຢີ ແລະ ຂະຫຍາຍຂອບເຂດການບໍລິການໃນຮູບແບບດີຈີຕໍ ໃຫ້ສາມາດຊຳລະສະສາງຂ້າມແດນ ດ້ວຍ QR CODE ໃຫ້ຫຼາຍຂຶ້ນ ເພື່ອອຳນວຍຄວາມສະດວກໃຫ້ການຄ້າຊາຍແດນ ແລະ ເຮັດໃຫ້ການເຊື່ອມໂຍງລະຫວ່າງພາກພື້ນໂດຍສະເພາະຂົງເຂດການເງິນການທະນາຄານຂອງບັນດາປະເທດລຸ່ມແມ່ນ້ຳຂອງ (GMS) ມີໃບໜ້າອັນໃໝ່.

1555 | BCEL Bank | www.bcel.com.la

ຂຽນຂ່າວໂດຍ: ນາງ ສຸກສາຄອນ ບຸນສະຫວັດທິພົນ, ພະແນກການຕະຫຼາດ